ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 29 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 14 ມັງກອນ 2019

# ຂໍ້ຕົກລົງ
# ວ່າດ້ວຍລະບົບການຊໍາລະທີ່ສໍາຄັນ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 16 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍລະບົບການຊໍາລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີຂອງກົມຄຸ້ມຄອງລະບົບການຊໍາລະສະສາງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງລະບົບການຊໍາລະທີ່ສໍາຄັນ ຢູ່ ສປປ ລາວ ເພື່ອເຮັດໃຫ້ລະບົບການຊໍາລະມີປະສິດທິພາບ, ໝັ້ນຄົງ, ປອດໄພ ແລະ ມີການບໍລິຫານຈັດການຄວາມສ່ຽງທີ່ເໝາະສົມແນໃສ່ຮັບປະກັນລະບົບການຊໍາລະທີ່ສໍາຄັນ ໃຫ້ບໍລິການໄດ້ຢ່າງຕໍ່ເນື່ອງ ສະດວກ, ວ່ອງໄວ ແລະ ມີປະສິດທິພາບ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ລະບົບການຊໍາລະທີ່ສໍາຄັນ**

ລະບົບການຊໍາລະທີ່ສໍາຄັນ ແມ່ນລະບົບການຊໍາລະທີ່ ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄວບຄຸມລະບົບສໍາຄັນ ແລະ ໃຫ້ບໍລິການ ໂດຍປະຕິບັດໜ້າທີ່ໃນການໄລ່ລຽງ ແລະ ການຫັກບັນຊີ ໃນລະບົບດັ່ງກ່າວ.

**ມາດຕາ 3 ອະທິບາຍສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຄວບຄຸມລະບົບສຳຄັນ** ໝາຍເຖິງ ຜູ້ຄວບຄຸມລະບົບການຊຳລະທີ່ສຳຄັນ ແລະ ຜູ້ໃຫ້ບໍລິການລະບົບການຊຳລະທີ່ສຳຄັນ;
2. **ສະມາຊິກ** ໝາຍເຖິງ ຜູ້ທີ່ໄດ້ຮັບອະນຸຍາດຈາກຜູ້ຄວບຄຸມ ໃຫ້ນຳໃຊ້ລະບົບການຊຳລະທີ່ສຳຄັນ;
3. **ຜູ້ໃຫ້ບໍລິການພາຍນອກ (Outsourcing)** ໝາຍເຖິງ ນິຕິບຸກຄົນ ທີ່ຖືກວ່າຈ້າງໂດຍຜູ້ຄວບຄຸມລະບົບສຳຄັນ ເພື່ອຊ່ວຍໃນການບໍລິຫານຈັດການລະບົບເຕັກໂນໂລຊີຂໍ້ມູນຂ່າວສານໃດໜຶ່ງ ຂອງຜູ້ຄວບຄຸມລະບົບສຳຄັນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ກົມຄຸ້ມຄອງລະບົບຊຳລະສະສາງ, ຜູ້ຄວບຄຸມລະບົບສຳຄັນ, ສະມາຊິກ ແລະ ພາກສ່ວນທີ່ມີສ່ວນກ່ຽວຂ້ອງກັບລະບົບການຊຳລະທີ່ສຳຄັນ.

## ພາກທີ II
## ລະບົບການຊຳລະທີ່ສຳຄັນ

**ມາດຕາ 5 ປະເພດລະບົບການຊຳລະທີ່ສຳຄັນ**

ລະບົບການຊຳລະທີ່ສຳຄັນ ປະກອບດ້ວຍ ສາມ ປະເພດ ດັ່ງນີ້:

1. ລະບົບການຊຳລະແບບທັນທີ (Real Time Gross Settlement System: RTGS);
2. ລະບົບການຊຳລະທຸລະກຳຍ່ອຍ ສຳລັບການຊຳລະດ້ວຍແຊັກ;
3. ລະບົບການຊຳລະທຸລະກຳຍ່ອຍ ສຳລັບງົບປະມານແຫ່ງລັດ (Automated Clearing House: ACH).

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດປະເພດລະບົບການຊຳລະທີ່ສຳຄັນ ໃຫ້ເໝາະສົມກັບສະພາບການໃນແຕ່ລະໄລຍະ.

**ມາດຕາ 6 ລະບົບການຊຳລະແບບທັນທີ**

ລະບົບການຊຳລະແບບທັນທີ (RTGS) ແມ່ນລະບົບການໂອນເງິນແບບເອເລັກໂຕຣນິກ ເພື່ອໃຫ້ບໍລິການໂອນເງິນດ້ວຍການຫັກບັນຊີເທື່ອລະທຸລະກຳທັນທີເມື່ອໄດ້ຮັບຄຳສັ່ງຈ່າຍຂອງສະມາຊິກ. ລະບົບຊຳລະແບບທັນທີ ມີພຽງລະບົບດຽວ ຊຶ່ງທະນາຄານແຫ່ງ ສປປ ລາວ ເປັນຜູ້ສ້າງ, ພັດທະນາ ແລະ ຄຸ້ມຄອງ ຕາມລະບຽບການຂອງຕົນ.

ລະບົບການຊຳລະແບບທັນທີ (RTGS) ສາມາດດຳເນີນການໃຫ້ບໍລິການຊຳລະແບບທັນທີ ທັງພາຍໃນປະເທດ ແລະ ຕ່າງປະເທດ ຕາມປະເພດສະກຸນເງິນຕາທີ່ໄດ້ຮັບອະນຸຍາດແຕ່ລະໄລຍະ.

**ມາດຕາ 7 ລະບົບການຊຳລະທຸລະກຳຍ່ອຍ ສຳລັບການຊຳລະດ້ວຍແຊັກ**

ລະບົບການຊຳລະທຸລະກຳຍ່ອຍ ສຳລັບການຊຳລະດ້ວຍແຊັກ ແມ່ນລະບົບທີ່ເຮັດໜ້າທີ່ໃນການໄລ່ລຽງ ແລະ ຫັກບັນຊີແຊັກ ທີ່ເປັນເງິນກີບໃຫ້ສະມາຊິກ.

**ມາດຕາ 8 ລະບົບການຊຳລະທຸລະກຳຍ່ອຍ ສຳລັບການຊຳລະງົບປະມານແຫ່ງລັດ (ACH)**

ລະບົບການຊຳລະທຸລະກຳຍ່ອຍ ສຳລັບການຊຳລະງົບປະມານແຫ່ງລັດ (ACH) ແມ່ນລະບົບການຊຳລະຜ່ານເຄື່ອງມືການຊຳລະດ້ວຍການໄລ່ລຽງ ແລະ ຫັກບັນຊີຫຼາຍທຸລະກຳພ້ອມກັນ ຕໍ່ວັນ ຫຼື ຫັກບັນຊີເທື່ອລະທຸລະກຳທັນທີໃຫ້ສະມາຊິກ ໃນການຊຳລະງົບປະມານແຫ່ງລັດ.

**ມາດຕາ 9 ຜູ້ເຂົ້າຮ່ວມໃນລະບົບການຊຳລະທີ່ສຳຄັນ**

ຜູ້ເຂົ້າຮ່ວມໃນລະບົບການຊຳລະທີ່ສຳຄັນ ປະກອບດ້ວຍ:

1. ຜູ້ຄວບຄຸມລະບົບສຳຄັນ;
2. ສະມາຊິກ.

## ພາກທີ III
## ການດຳເນີນງານຂອງຜູ້ຄວບຄຸມລະບົບສຳຄັນ

**ມາດຕາ 10 ການດຳເນີນງານຂອງຜູ້ຄວບຄຸມລະບົບສຳຄັນ**

ຜູ້ຄວບຄຸມລະບົບສຳຄັນ ຕ້ອງດຳເນີນການຄວບຄຸມລະບົບຊຳລະທີ່ສຳຄັນ ຕາມຫຼັກການ ດັ່ງນີ້:

1. ການຄຸ້ມຄອງຜົນຂອງການຊຳລະ;
2. ການຄຸ້ມຄອງບໍລິຫານ;
3. ການບໍລິຫານຄວາມສ່ຽງ ແລະ ການຮັກສາຄວາມປອດໄພ;
4. ການຄຸ້ມຄອງສະມາຊິກ;
5. ການສົ່ງເສີມໃຫ້ມີການແຂ່ງຂັນ.

### ໝວດທີ 1
### ການຄຸ້ມຄອງຜົນຂອງການຊຳລະ ແລະ ການຄຸ້ມຄອງບໍລິຫານ

**ມາດຕາ 11 ການຄຸ້ມຄອງຜົນຂອງການຊຳລະ**

ຄຳສັ່ງໂອນເງິນ ຫຼື ຫັກບັນຊີ ທີ່ສົ່ງເຂົ້າລະບົບການຊຳລະທີ່ສຳຄັນ ມີຜົນສົມບູນ ກໍຕໍ່ເມື່ອຜູ້ຄວບຄຸມລະບົບສຳຄັນ ໄດ້ຫັກເງິນຂອງສະມາຊິກຜູ້ໂອນ ແລະ ນຳເຂົ້າບັນຊີຂອງຜູ້ຮັບໂອນ ຕາມຫຼັກການຂອງລະບົບທີ່ຜູ້ຄວບຄຸມລະບົບສຳຄັນກຳນົດ. ໃນເວລາທີ່ການຊຳລະມີຜົນສົມບູນແລ້ວ ຜູ້ຄວບຄຸມລະບົບສຳຄັນ, ສະມາຊິກ ຫຼື ຜູ້ທີ່ກ່ຽວຂ້ອງ ບໍ່ສາມາດໂຈະ, ດັດແກ້, ຍົກເລີກ ຫຼື ຄັດຄ້ານ.

ຜູ້ຄວບຄຸມລະບົບສຳຄັນ ຕ້ອງມີລະບຽບການສະເພາະຂອງຕົນໄວ້ເປັນລາຍລັກອັກສອນ ເພື່ອຄຸ້ມຄອງຜົນຂອງການຊຳລະ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຫຼັກການ ແລະ ເງື່ອນໄຂຂອງການໄລ່ລຽງ ແລະ ການຫັກບັນຊີ;
2. ຂັ້ນຕອນການດຳເນີນງານ;
3. ໄລຍະເວລາໃນການຊຳລະ;
4. ຈຸດຫັກບັນຊີສຸດທ້າຍ (Point of Finality);
5. ການຄ້ຳປະກັນການຊຳລະ;
6. ການແກ້ໄຂ, ດັດແກ້, ຍົກເລີກ, ຖອນ, ຄັດຄ້ານ ຫຼື ແກ້ໄຂລາຍການທຸລະກຳ ທີ່ມີການຜິດພາດ ຫຼື ບໍ່ຖືກຕ້ອງ.

**ມາດຕາ 12 ການຄຸ້ມຄອງບໍລິຫານ**

ຜູ້ຄວບຄຸມລະບົບສຳຄັນ ຕ້ອງປະຕິບັດຕາມຫຼັກການຄຸ້ມຄອງບໍລິຫານທີ່ດີ ໃນການຄວບຄຸມພາຍໃນ ແລະ ການລາຍງານການເຄື່ອນໄຫວ ແລະ ແຜນການທີ່ສຳຄັນ.

**ມາດຕາ 13 ການຄວບຄຸມພາຍໃນ**

ຜູ້ຄວບຄຸມລະບົບສຳຄັນ ຕ້ອງມີລະບົບການຄວບຄຸມພາຍໃນຢ່າງຈະແຈ້ງ ໂດຍແຍກພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບລະຫວ່າງຜູ້ບໍລິຫານ ແລະ ພະນັກງານ ຕາມຫຼັກການແບ່ງຄວາມຮັບຜິດຊອບໃນການຄວບຄຸມພາຍໃນລະບົບການຊຳລະທີ່ສຳຄັນ, ສ້າງກົນໄກຕິດຕາມກວດກາ, ປະເມີນຜົນໄວ້ຢ່າງເປັນລາຍລັກອັກສອນ ແລະ ກຳນົດກ່ຽວກັບການກວດສອບພາຍໃນ ເພື່ອປ້ອງກັນ ຄວາມສ່ຽງຈາກຄວາມຜິດພາດ, ການສໍ້ໂກງ, ການບໍລິຫານຄວາມສ່ຽງທີ່ບໍ່ເໝາະສົມແລະບໍ່ຮັດກຸມພຽງພໍ, ການບໍ່ປະຕິບັດລະບຽບພາຍໃນຂອງຜູ້ຄວບຄຸມລະບົບສຳຄັນ ຫຼື ກົດໝາຍທີ່ກ່ຽວຂ້ອງ.

ຫຼັກການແບ່ງຄວາມຮັບຜິດຊອບໃນການຄວບຄຸມພາຍໃນມີ ສາມ ລະດັບ (Three Lines of Defence) ຄື:

1. ຜູ້ດຳເນີນງານລະບົບການຊຳລະທີ່ມີຄວາມສຳຄັນ;
2. ຜູ້ບໍລິຫານຄວາມສ່ຽງ;
3. ຜູ້ກວດສອບພາຍໃນ.

**ມາດຕາ 14 ການລາຍງານການເຄື່ອນໄຫວ ແລະ ແຜນການທີ່ສຳຄັນ**

ຜູ້ຄວບຄຸມລະບົບສຳຄັນ ຕ້ອງລາຍງານການດຳເນີນງານ ແລະ ແຜນການທີ່ສຳຄັນ ທີ່ກ່ຽວຂ້ອງກັບລະບົບການຊຳລະທີ່ມີຄວາມສຳຄັນ ຕໍ່ກົມຄຸ້ມຄອງລະບົບຊຳລະສະສາງ ຢ່າງຕໍ່ເນື່ອງ ເພື່ອຕິດຕາມການດຳເນີນງານ ເຊັ່ນ: ແຜນການແກ້ໄຂລະບົບທີ່ສຳຄັນ, ການແກ້ໄຂບັນຫາທີ່ສຳຄັນ, ການກຳນົດເປົ້າໝາຍໃນການໃຫ້ບໍລິການ ແລະ ການລາຍງານລະດັບຄວາມພ້ອມໃຊ້ງານຂອງລະບົບ (System Availability).

# ໝວດທີ 2
## ການບໍລິຫານຄວາມສ່ຽງ ແລະ ການຮັກສາຄວາມປອດໄພ

**ມາດຕາ 15 ການບໍລິຫານຄວາມສ່ຽງ**

ຄວາມສ່ຽງຕົ້ນຕໍ ຂອງລະບົບການຊຳລະທີ່ສຳຄັນ ມີດັ່ງນີ້:

1. ຄວາມສ່ຽງດ້ານຍຸດທະສາດ (Strategic Risk);
2. ຄວາມສ່ຽງດ້ານສະພາບຄ່ອງ (Liquidity Risk);
3. ຄວາມສ່ຽງດ້ານການດຳເນີນງານ (Operational Risk);
4. ຄວາມສ່ຽງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ (Information Technology Risk);
5. ຄວາມສ່ຽງດ້ານການຫັກບັນຊີ (Settlement Risk).

ໃນການບໍລິຫານຄວາມສ່ຽງຂອງລະບົບການຊຳລະທີ່ສຳຄັນ ຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງຂອງມາດຕານີ້ ຜູ້ຄວບຄຸມລະບົບສຳຄັນ ຕ້ອງປະຕິບັດ ດັ່ງນີ້:

1. ກຳນົດນະໂຍບາຍ ແລະ ມາດຕະການ ກ່ຽວກັບການບໍລິຫານຄວາມສ່ຽງ ຢ່າງເປັນລາຍລັກອັກສອນ ໂດຍຜ່ານການເຫັນດີຈາກ ກົມຄຸ້ມຄອງລະບົບຊຳລະສະສາງ;
2. ແຕ່ງຕັ້ງຜູ້ຮັບຜິດຊອບ ເພື່ອຕິດຕາມ ແລະ ລາຍງານ ຄວາມສ່ຽງຂອງລະບົບ ຢ່າງເປັນປົກກະຕິ;
3. ປະເມີນ, ທົບທວນ ແລະ ທົດສອບ ຄວາມສ່ຽງຂອງລະບົບທີ່ໃຫ້ບໍລິການ ແລະ ຈັດຕັ້ງປະຕິບັດຕາມແຜນຮອງຮັບຄວາມສ່ຽງຂອງລະບົບຮ່ວມກັບສະມາຊິກ ແລະ ຜູ້ທີ່ກ່ຽວຂ້ອງ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ຫຼື ທຸກຄັ້ງທີ່ມີການປ່ຽນແປງ ຫຼື ປັບປຸງລະບົບທີ່ໃຫ້ບໍລິການ.

**ມາດຕາ 16 ການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ**

ຜູ້ຄວບຄຸມລະບົບສຳຄັນ ຕ້ອງວິເຄາະ ແລະ ປະເມີນຜົນກະທົບຈາກ ການໃຫ້ບໍລິການລະບົບການຊຳລະທີ່ສຳຄັນ ເພື່ອກຳນົດນະໂຍບາຍການບໍລິຫານຄວາມຕໍ່ເນື່ອງຂອງທຸລະກິດ (Business Continuity Management: BCM) ແລະ ແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ (Business Continuity Plan: BCP).

ຜູ້ຄວບຄຸມລະບົບສຳຄັນ ຕ້ອງທົດສອບ ແລະ ທົບທວນ ການປະຕິບັດຕາມແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ ຮ່ວມກັບສະມາຊິກ ແລະ ຜູ້ທີ່ກ່ຽວຂ້ອງ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ ຫຼື ທຸກຄັ້ງທີ່ມີການປ່ຽນແປງ, ປັບປຸງ ລະບົບດັ່ງກ່າວ.

**ມາດຕາ 17 ການໃຊ້ບໍລິການຈາກ ຜູ້ໃຫ້ບໍລິການພາຍນອກ (Outsourcing)**

ຜູ້ຄວບຄຸມລະບົບສຳຄັນ ສາມາດຈ້າງຜູ້ໃຫ້ບໍລິການພາຍນອກ ເພື່ອຊ່ວຍຄວບຄຸມລະບົບແທນ ໃນວຽກງານລະບົບເຕັກນິກ ແລະ ວຽກງານອື່ນ ທີ່ມີຜົນກະທົບຕໍ່ການໃຫ້ບໍລິການລະບົບການຊຳລະທີ່ສຳຄັນ. ການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ຜູ້ຄວບຄຸມລະບົບສຳຄັນ ຕ້ອງປະຕິບັດ ດັ່ງນີ້:

1. ຕ້ອງມີລະບຽບການຄຸ້ມຄອງການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ກ່ຽວກັບການຮັກສາຄວາມປອດໄພ ແລະ ຄວາມລັບຂອງລະບົບ ແລະຂໍ້ມູນ, ການຮັກສາຄວາມຖືກຕ້ອງເຊື່ອຖືໄດ້ຂອງລະບົບ ແລະ ການຮັກສາຄວາມພ້ອມໃຊ້ງານຂອງລະບົບເຕັກນິກທີ່ໃຊ້ບໍລິການ;
2. ການປະເມີນ ແລະ ການບໍລິຫານຄວາມສ່ຽງຈາກ ການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ກ່ຽວກັບການຮັກສາຄວາມລັບ ແລະ ການຄຸ້ມຄອງຂໍ້ມູນສ່ວນຕົວ ລວມທັງ ຄວາມສ່ຽງຈາກການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ (Interdependency Risk) ທີ່ອາດເຮັດໃຫ້ເກີດຄວາມຫຍຸ້ງຍາກຕໍ່ການປັບປຸງແປງ ຫຼື ການຍົກເລີກການໃຊ້ບໍລິການດັ່ງກ່າວ (Vendor Lock-in) ແລະ ກໍລະນີ ຄວາມສ່ຽງເກີດຈາກການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ທີ່ໃຫ້ບໍລິການໃຫ້ແກ່ຫຼາຍພາກສ່ວນໃນເວລາດຽວກັນ (Concentration Risk);
3. ມີແຜນຮອງຮັບຄວາມຕໍ່ເນື່ອງຂອງການດໍາເນີນທຸລະກິດ (BCP) ຈາກການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ.

**ມາດຕາ 18 ການຮັກສາຄວາມປອດໄພດ້ານເຕັກໂນໂລຊີຂໍ້ມູນຂ່າວສານ**

ຜູ້ຄວບຄຸມລະບົບສໍາຄັນ ຕ້ອງເປັນເຈົ້າການໃນການຮັກສາຄວາມປອດໄພ ດ້ານເຕັກໂນໂລຊີຂໍ້ມູນຂ່າວສານຕິດພັນກັບລະບົບທີ່ຕົນຄວບຄຸມ ພ້ອມທັງແຕ່ງຕັ້ງບຸກຄົນຈາກພາຍນອກ ທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການ ທາງດ້ານຄວາມປອດໄພຂອງລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອປະເມີນຄວາມອ່ອນໄຫວຂອງລະບົບຄວາມປອດໄພດ້ານເຕັກໂນໂລຊີຂໍ້ມູນຂ່າວສານ (Vulnerability Assessment) ແລະ ທົດສອບເຈາະລະບົບ (Penetration Test) ເພື່ອທົດສອບປະສິດທິພາບຂອງລະບົບເຕັກໂນໂລຊີ ແລະ ການຮັກສາຄວາມປອດໄພດ້ານເຕັກໂນໂລຊີຂໍ້ມູນຂ່າວສານ.

ພາຍຫຼັງສໍາເລັດການປະເມີນຄວາມອ່ອນໄຫວ ແລະ ການທົດສອບປະສິດທິພາບຂອງລະບົບເຕັກໂນໂລຊີ ຜູ້ຄວບຄຸມລະບົບສໍາຄັນ ຕ້ອງລາຍງານຜົນການປະເມີນ ພ້ອມທັງສ້າງແຜນການປັບປຸງ ຫຼື ແກ້ໄຂ ກໍລະນີທີ່ພົບວ່າລະບົບມີຄວາມບົກຜ່ອງ ໃຫ້ແກ່ກົມຄຸ້ມຄອງລະບົບຊໍາລະສະສາງຊາບ ຢ່າງເປັນລາຍລັກອັກສອນ.

## ໝວດທີ 3
## ການຄຸ້ມຄອງສະມາຊິກ ແລະ ການສົ່ງເສີມໃຫ້ມີການແຂ່ງຂັນ

**ມາດຕາ 19 ການປົກປ້ອງສະມາຊິກ**

ຜູ້ຄວບຄຸມລະບົບສໍາຄັນ ຕ້ອງດໍາເນີນການປົກປ້ອງສະມາຊິກຂອງຕົນ ດ້ວຍວິທີການ ດັ່ງນີ້:
1. ສ້າງລະບຽບການຄຸ້ມຄອງ;
2. ແຈ້ງຂໍ້ມູນໃຫ້ແກ່ສະມາຊິກ;
3. ເກັບຮັກສາຂໍ້ມູນສ່ວນບຸກຄົນຂອງສະມາຊິກ;
4. ເປີດເຜີຍຂໍ້ມູນ ແລະ ຄ່າທໍານຽມ.

### ມາດຕາ 20 ການສ້າງລະບຽບການຄຸ້ມຄອງ

ຜູ້ຄວບຄຸມລະບົບສຳຄັນ ຕ້ອງມີລະບຽບການກ່ຽວກັບການນຳໃຊ້ລະບົບການຊຳລະທີ່ສຳຄັນ ໂດຍມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ເງື່ອນໄຂ ແລະ ຂັ້ນຕອນ ສຳລັບການສະເໜີເຂົ້າເປັນສະມາຊິກ, ການໂຈະ, ການຖອນ ຫຼື ຮັບເຂົ້າເປັນສະມາຊິກຄືນໃໝ່;
2. ສິດ ແລະ ພັນທະ ຂອງສະມາຊິກ;
3. ການນຳໃຊ້ລະບົບ;
4. ມາດຕະການບໍລິຫານຄວາມສ່ຽງດ້ານການເງິນ (Financial Risk).

ກໍລະນີມີການປັບປຸງລະບຽບການຄຸ້ມຄອງຜູ້ຄວບຄຸມ ຕ້ອງແຈ້ງໃຫ້ສະມາຊິກຊາບລ່ວງໜ້າ ສາມສິບວັນ ກ່ອນວັນທີ່ລະບຽບການມີຜົນບັງຄັບໃຊ້ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ.

### ມາດຕາ 21 ການແຈ້ງຂໍ້ມູນໃຫ້ແກ່ສະມາຊິກ

ຜູ້ຄວບຄຸມລະບົບສຳຄັນ ຕ້ອງແຈ້ງການໂຈະ, ການຍົກເລີກ ຫຼື ການຖອນ ການໃຫ້ບໍລິການກັບສະມາຊິກລາຍໃດໜຶ່ງ ໃຫ້ແກ່ສະມາຊິກລາຍອື່ນຂອງຕົນ ຊາບທັນທີ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ.

ກໍລະນີ ສະມາຊິກລາຍໃດໜຶ່ງລາອອກຈາກການເປັນສະມາຊິກ ຜູ້ຄວບຄຸມລະບົບສຳຄັນ ຕ້ອງແຈ້ງຂໍ້ມູນໃຫ້ສະມາຊິກຂອງຕົນຮັບຊາບລ່ວງໜ້າ ສິບຫ້າວັນ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ.

### ມາດຕາ 22 ການເກັບຮັກສາຂໍ້ມູນສ່ວນບຸກຄົນຂອງສະມາຊິກ

ຜູ້ຄວບຄຸມລະບົບສຳຄັນ ຕ້ອງມີລະບຽບໃນການເກັບຮັກສາຂໍ້ມູນສ່ວນບຸກຄົນຂອງສະມາຊິກ, ການກຳນົດຊັ້ນຄວາມລັບໃນການເຂົ້າເຖິງຂໍ້ມູນ ແລະ ການລະບຸຕົວບຸກຄົນທີ່ມີສິດເຂົ້າເຖິງຂໍ້ມູນດັ່ງກ່າວ ພ້ອມທັງໃຫ້ມີລະບົບການຈັດເກັບຂໍ້ມູນ ທີ່ຖືກຕ້ອງເຊື່ອຖືໄດ້ ແລະ ປ້ອງກັນຜູ້ທີ່ບໍ່ມີໜ້າທີ່ກ່ຽວຂ້ອງເຂົ້າເຖິງ ຫຼື ແກ້ໄຂຂໍ້ມູນທີ່ເກັບຮັກສາ.

ຜູ້ຄວບຄຸມລະບົບສຳຄັນ ຕ້ອງເກັບຮັກສາຄວາມລັບຂໍ້ມູນສ່ວນບຸກຄົນຂອງສະມາຊິກ ໂດຍບໍ່ເປີດເຜີຍຂໍ້ມູນເຫຼົ່ານັ້ນຕະຫຼອດໄລຍະເວລາການໃຊ້ບໍລິການ ແລະ ພາຍຫຼັງທີ່ຢຸດໃຊ້ບໍລິການແລ້ວ ຍົກເວັ້ນກໍລະນີຕໍ່ໄປນີ້:

1. ການເປີດເຜີຍໂດຍໄດ້ຮັບຄວາມຍິນຍອມຈາກສະມາຊິກຜ່ານທາງເອເລັກໂຕຣນິກ ຫຼື ແຈ້ງເປັນລາຍລັກອັກສອນ.
2. ການເປີດເຜີຍເພື່ອປະໂຫຍດແກ່ການສືບສວນ-ສອບສວນ ຫຼື ການພິຈາລະນາຄະດີ;
3. ການເປີດເຜີຍແກ່ຜູ້ກວດສອບບັນຊີຂອງຜູ້ຄວບຄຸມ;
4. ການເປີດເຜີຍເພື່ອປະໂຫຍດໃນການກຳນົດນະໂຍບາຍ ແລະ ຄຸ້ມຄອງລະບົບການຊຳລະ ຂອງທະນາຄານແຫ່ງ ສປປ ລາວ;
5. ການເປີດເຜີຍເພື່ອປະໂຫຍດໃນການປະຕິບັດຕາມກົດໝາຍ.

**ມາດຕາ 23 ການເປີດເຜີຍຂໍ້ມູນ ແລະ ຄ່າທຳນຽມ**

ຜູ້ຄວບຄຸມລະບົບສຳຄັນ ຕ້ອງເປີດເຜີຍຂໍ້ມູນຕໍ່ສະມາຊິກ ກ່ຽວກັບການໃຫ້ບໍລິການລະບົບຂອງຕົນ ຜ່ານສື່ສິ່ງພິມ ຫຼື ເວັບໄຊ (Website) ດັ່ງນີ້:

1. ລາຍຊື່ສະມາຊິກ;
2. ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະມາຊິກ;
3. ການກຳນົດຄ່າທຳນຽມໃນການໃຫ້ບໍລິການລະບົບ. ກໍລະນີມີການປ່ຽນແປງຄ່າທຳນຽມການໃຫ້ບໍລິການ ຜູ້ຄວບຄຸມ ຕ້ອງແຈ້ງໃຫ້ສະມາຊິກຮັບຊາບລ່ວງໜ້າ ສາມສິບວັນກ່ອນມີຜົນບັງຄັບໃຊ້.

**ມາດຕາ 24 ການສົ່ງເສີມໃຫ້ມີການແຂ່ງຂັນ**

ຜູ້ຄວບຄຸມລະບົບສຳຄັນ ຕ້ອງສົ່ງເສີມໃຫ້ມີການແຂ່ງຂັນ ໂດຍກຳນົດ ການເຂົ້າຮ່ວມ ແລະອອກຈາກລະບົບ ແລະ ການໃຫ້ບໍລິການຢ່າງມີປະສິດທິພາບ ຢ່າງເປັນລາຍລັກອັກສອນ.

ຜູ້ຄວບຄຸມລະບົບສຳຄັນ ຕ້ອງກຳນົດຈຸດປະສົງ, ຫຼັກການ, ເງື່ອນໄຂ, ວິທີປະຕິບັດ ແລະ ຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໃນການເຂົ້າຮ່ວມ ແລະ ການອອກຈາກລະບົບ ຂອງສະມາຊິກໄວ້ຢ່າງຈະແຈ້ງ ໂດຍຄຳນຶງເຖິງຫຼັກການໃນການເຂົ້າເຖິງການໃຫ້ບໍລິການທີ່ເປັນທຳ, ເປີດກວ້າງ (Fair and Open Access) ແລະ ເປີດເຜີຍໃຫ້ສະມາຊິກ ແລະ ມວນຊົນຊາບ ຢ່າງທົ່ວເຖິງ. ຜູ້ຄວບຄຸມລະບົບສຳຄັນ ຕ້ອງມີການປະເມີນຄວາມສ່ຽງ ແລະ ວິເຄາະຜົນກະທົບ ທີ່ກ່ຽວຂ້ອງກັບການຮັບສະມາຊິກລາຍໃໝ່.

ຜູ້ຄວບຄຸມລະບົບສຳຄັນ ຕ້ອງກຳນົດເປົ້າໝາຍໃນການໃຫ້ບໍລິການທີ່ສາມາດປະເມີນ ແລະ ວັດຜົນໄດ້ ເປັນຕົ້ນ ລະດັບຄວາມພ້ອມໃຊ້ງານຂອງລະບົບ (System Availability) ລວມທັງ ຕິດຕາມ, ປະເມີນຜົນ ແລະ ລາຍງານຜົນ ໃຫ້ຜູ້ຄຸ້ມຄອງຊາບຢ່າງເປັນປົກກະຕິ ພ້ອມທັງເປີດເຜີຍຜົນການດຳເນີນງານຂອງລະບົບ ໃຫ້ສະມາຊິກຊາບ.

ຜູ້ຄວບຄຸມລະບົບສຳຄັນ ຕ້ອງມີການສຳຫຼວດ ແລະ ຮັບຟັງຄຳເຫັນຂອງສະມາຊິກ ກ່ຽວກັບການໃຫ້ບໍລິການ ຢ່າງເປັນປົກກະຕິ ເພື່ອພັດທະນາ ແລະ ປັບປຸງໃຫ້ລະບົບດັ່ງກ່າວ ສາມາດຕອບສະໜອງຄວາມຕ້ອງການຂອງສະມາຊິກ ແລະ ທັນຕໍ່ສະພາບການປ່ຽນແປງຂອງເຕັກໂນໂລຊີທີ່ເກີດຂຶ້ນຢ່າງວ່ອງໄວ.

## ໝວດທີ 4
## ການເຄື່ອນໄຫວຂອງສະມາຊິກ

**ມາດຕາ 25 ສະມາຊິກ**

ສະມາຊິກ ແມ່ນຜູ້ທີ່ໄດ້ຮັບອະນຸຍາດໃຫ້ໃຊ້ບໍລິການລະບົບການຊຳລະທີ່ສຳຄັນ ແລະ ສາມາດປະຕິບັດຕາມຫຼັກການ ແລະ ເງື່ອນໄຂ ທີ່ຜູ້ຄວບຄຸມລະບົບສຳຄັນກຳນົດ.

**ມາດຕາ 26 ການເຄື່ອນໄຫວຂອງສະມາຊິກ**

ການໃຊ້ບໍລິການໃນລະບົບການຊໍາລະທີ່ສໍາຄັນ ສະມາຊິກ ຕ້ອງປະຕິບັດຕາມຂັ້ນຕອນ, ເງື່ອນໄຂ, ສິດ ແລະພັນທະ ແລະ ລະບຽບການກ່ຽວກັບການໃຊ້ບໍລິການທີ່ຜູ້ຄວບຄຸມລະບົບສໍາຄັນວາງອອກ ທັງໄດ້ຮັບການປົກປ້ອງໃນການໃຊ້ບໍລິການ ຕາມຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

# ພາກທີ IV
# ການຄຸ້ມຄອງ ແລະ ການກວດກາ
## ໝວດທີ 1
## ການຄຸ້ມຄອງວຽກງານລະບົບການຊໍາລະທີ່ສໍາຄັນ

**ມາດຕາ 27 ອົງການຄຸ້ມຄອງ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງວຽກງານລະບົບການຊໍາລະທີ່ສໍາຄັນ ໂດຍມອບໃຫ້ກົມຄຸ້ມຄອງລະບົບຊໍາລະສະສາງ ເປັນຜູ້ຮັບຜິດຊອບໂດຍກົງ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງກົມຄຸ້ມຄອງລະບົບຊໍາລະສະສາງ**

ໃນການຄຸ້ມຄອງວຽກງານລະບົບການຊໍາລະທີ່ສໍາຄັນ ກົມຄຸ້ມຄອງລະບົບຊໍາລະສະສາງ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ ແລະ ຕິດຕາມກວດກາລະບົບການຊໍາລະທີ່ສໍາຄັນ, ຜູ້ເຂົ້າຮ່ວມໃນລະບົບຊໍາລະ ໃນການຈັດຕັ້ງປະຕິບັດບັນດາຫຼັກການ, ມາດຕະຖານ ແລະ ລະບຽບການຕ່າງໆໃຫ້ສອດຄ່ອງຕາມລະບຽບກົດໝາຍ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ບັນດານະໂຍບາຍແຜນຍຸດທະສາດ ແລະ ລະບຽບການຕ່າງໆທີ່ຕິດພັນກັບລະບົບການຊໍາລະທີ່ສໍາຄັນ ໃຫ້ແທດເໝາະກັບຫຼັກການສາກົນໃນແຕ່ລະໄລຍະ;
3. ຄົ້ນຄວ້າ ແລະ ພິຈາລະນາແກ້ໄຂຂໍ້ຂັດແຍ່ງຕ່າງໆ ລະຫວ່າງຜູ້ເຂົ້າຮ່ວມໃນລະບົບຊໍາລະທີ່ສໍາຄັນ;
4. ສະເໜີຜູ້ຄວບຄຸມລະບົບສໍາຄັນ ໃນການປັບປຸງ, ພັດທະນາ, ແກ້ໄຂບັນຫາຕ່າງໆກ່ຽວກັບລະບົບຊໍາລະທີ່ສໍາຄັນຂອງຕົນ ເພື່ອແນໃສ່ເຮັດໃຫ້ຮັບປະກັນຜົນສໍາເລັດໃນການປະຕິບັດວຽກງານ.

## ໝວດທີ 2
## ການກວດກາ

**ມາດຕາ 29 ອົງການກວດກາ**

ອົງການກວດກາວຽກງານລະບົບການຊໍາລະທີ່ສໍາຄັນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງ ແລະປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 28 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 30 ການກວດກາທາງວິຊາການ**

ການກວດກາທາງດ້ານວິຊາການ ນອກຈາກປະຕິບັດຕາມ ມາດຕາ 53 ຂອງກົດໝາຍວ່າດ້ວຍລະບົບການຊຳລະ ຍັງຕ້ອງປະຕິບັດການກວດກາຕາມເນື້ອໃນເພີ່ມຕື່ມ ດັ່ງນີ້:

1. ການບໍລິຫານຄວາມສ່ຽງ;
2. ການນຳໃຊ້ການບໍລິການຈາກຜູ້ໃຫ້ບໍລິການພາຍນອກ.

**ມາດຕາ 31 ຮູບແບບການກວດກາ**

ຮູບແບບການກວດກາ ປະກອບດ້ວຍ ສອງ ຮູບແບບ ຄື: ການກວດກາຕາມເອກະສານ ແລະ ການກວດກາກັບທີ່.

ການກວດກາຕາມເອກະສານ ແມ່ນການກວດກາ ບັນດາຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ລາຍງານໃຫ້ອົງການຄຸ້ມຄອງຢ່າງເປັນປົກກະຕິ ຫຼື ຕາມການຮຽກຮ້ອງຂອງອົງການຄຸ້ມຄອງ ໃນຮູບແບບຂອງສຳເນົາເອກະສານ ຫຼື ຜ່ານທາງເອເລັກໂຕຣນິກ ເພື່ອວິເຄາະ, ປະເມີນຄວາມສ່ຽງ ແລະ ກວດກາການຈັດຕັ້ງປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການເຄື່ອນໄຫວວຽກງານຂອງລະບົບການຊຳລະທີ່ສຳຄັນ.

ການກວດກາກັບທີ່ ແມ່ນການລົງເກັບກຳຂໍ້ມູນ ແລະ ເອກະສານຕ່າງໆ ລວມທັງ ການສຳພາດ, ໂອ້ລົມ ແລະ ປຶກສາຫາລື.

**ມາດຕາ 32 ການລາຍງານ**

ຜູ້ຄວບຄຸມລະບົບສຳຄັນ ຕ້ອງລາຍງານການເຄື່ອນໄຫວຂອງຕົນ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ໃຫ້ແກ່ອົງການຄຸ້ມຄອງຊາບ ດັ່ງນີ້:

1. ລາຍງານປະຈຳວັນ ພາຍໃນວັນ ຫຼັງເປີດ ແລະ ປິດ ລະບົບການຊຳລະທີ່ສຳຄັນ;
2. ລາຍງານປະຈຳເດືອນ ພາຍໃນ ສິບ ວັນ ນັບແຕ່ວັນສິ້ນສຸດເດືອນ;
3. ລາຍງານປະຈຳໄຕມາດ ພາຍໃນ ສິບຫ້າ ວັນ ນັບແຕ່ວັນສິ້ນສຸດໄຕມາດ;
4. ລາຍງານປະຈຳຫົກເດືອນ ພາຍໃນ ສີ່ສິບຫ້າ ວັນ ນັບແຕ່ວັນສິ້ນສຸດ ໄຕມາດສອງ ແລະ ໄຕມາດສີ່;
5. ປະຈຳປີ ພາຍໃນ ເກົ້າສິບ ວັນ ນັບແຕ່ວັນສິ້ນສຸດປີການບັນຊີ.

ຜູ້ຄວບຄຸມລະບົບສຳຄັນ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງ ກັບການລາຍງານ ແລະ ການເປີດເຜີຍຂໍ້ມູນ ຢ່າງໜ້ອຍ ສິບປີ.

## ພາກທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 33** ການຈັດຕັ້ງປະຕິບັດ

ກົມຄຸ້ມຄອງລະບົບຊຳລະສະສາງ, ຜູ້ຄວບຄຸມລະບົບສຳຄັນ ແລະ ພາກສ່ວນທີ່ກ່ຽວຂ້ອງກັບລະບົບການຊຳລະທີ່ສຳຄັນ ເປັນເຈົ້າການປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 34** ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ